## ພາລະກິດ

1. ສ້າງໂອກາດທາງການສຶກສາ ທີ່ກໍານົດໄວ້ຢ່າງ ເປັນລະບົບໃຫ້ແກ່ນັກສຶກສາ ທີ່ຈະໄດ້ສັງເກດເຫັນ ຫຼື ໄດ້ປະສົບການເຮັດວຽກຕົວຈິງກັບລູກຄວາມ ຫຼື ລູກຄວາມ ທີ່ສົມມຸດຂຶ້ນ ຊຶ່ງຈະເຮັດໃຫ້ນັກສຶກສາໄດ້ຮຽນຮູ້ ແລະ ນໍາໃຊ້ຄວາມຮູ້, ທັກສະ, ຄຸນຄ່າ ຈາກປະສົບການດັ່ງກ່າວ;
2. ໃຫ້ບໍລິການທາງດ້ານກົດໝາຍແກ່ຜູ້ດ້ອຍໂອກາດ ທີ່ບໍ່ສາມາດເຂົ້າເຖິງການບໍລິການກົດໝາຍ;
3. ພັດທະນາຈັນຍາບັນຂອງນັກກົດໝາຍໃນການບໍລິການສັງຄົມ ແລະ ຄວາມຍຸຕິທໍາໃນສັງຄົມ ແລະ ສ້າງພື້ນຖານໃຫ້ມີຄວາມຮັບຜິດຊອບ ທາງດ້ານວິຊາຊີບ;
4. ເພື່ອໃຫ້ອາຈານ ມີສ່ວນຮ່ວມໃນການພັດທະນາດ້ານວິຊາການ ໃນທັກສະ ແລະ ທັດສະດີ ໃນການປະກອບ ວິຊາຊີບທີ່ເຊື່ອມໂຍງລະຫວ່າງມະຫາວິທະຍາໄລ ແລະ ຜູ້ປະກອບວິຊາຊີບດ້ານກົດໝາຍ;
5. ວິທີການສອນແບບມີສ່ວນຮ່ວມ ແລະ ສະທ້ອນຄືນ, ສ້າງແຮງບັນດານໃຈໃຫ້ແກ່ນັກສຶກສາໃນການປະກອບວິຊາຊີບທາງດ້ານກົດໝາຍ ຊຶ່ງການບັນຍາຍບໍ່ສາມາດເຮັດໃຫ້ບັນລຸຜົນ ໄດ້, ການຮຽນແບບສະທ້ອນຄືນ ຍັງເປັນວິທີການສອນທີ່ໄດ້ ປະສິດທິຜົນສູງສໍາລັບການຮຽນແບບຜູ້ໃຫຍ່.






CLE



ວັນ, ເວລາ ເປີດ-ປິດ
ສູນບໍລິການກົດໝາຍເພື່ອປະຊາຊົນ
ຫ້ອງການບໍລິການໃຫ້ຄໍາປຶກສາທາງດ້ານກົດໝາຍ
ເປີດ ວັນຈັນ ຫາ ວັນສຸກ
ເວລາ 08:00 ໂມງ ຫາ 16:00 ໂມງ

### ຊ່ອງທາງຕິດຕໍ່


ເບີໂທລະສັບ : 030 5668 539
Whatapp: +856 20 59 929 454
ເຟສບຸກ: Clinical Legal Education Program in Lao PDR
ອີເມວ: Flpclegroup@gmail.com

ສະຖານທີ່ຕັ້ງຢູ່ທີ່: ຖະໜົນມິດຕະພາບລາວ-ໄທ, ບ້ານ ດອນນົກຂຸ້ມ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ,
ຕູ້ ປ.ນ 822 ນະຄອນຫຼວງວຽງຈັນ





# ສູນບໍລິການກົດໝາຍເພື່ອປະຊາຊົນ
# ຄະນະນິຕິສາດ ແລະ ລັດຖະສາດ
# ມະຫາວິທະຍາໄລແຫ່ງຊາດ

**Clinical Legal Education**
**Faculty of Law and Political Science**
**National University of Laos**

## ວິໄສທັດ

ສ້າງສູນບໍລິການກົດໝາຍເພື່ອປະຊາຊົນໃຫ້ກາຍເປັນສູນຝຶກທັກສະທາງດ້ານກົດໝາຍໃຫ້ແກ່ນັກສຶກສາ ແລະ ໃຫ້ການບໍລິການທາງດ້ານກົດໝາຍໃຫ້ແກ່ສັງຄົມຢ່າງມີປະສິດທິພາບ.

## ປະຫວັດຄວາມເປັນມາ

ສູນບໍລິການກົດໝາຍເພື່ອປະຊາຊົນແມ່ນການຈັດຕັ້ງຫນຶ່ງທີ່ຂຶ້ນກັບ ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາ ໄລແຫ່ງຊາດ. ມີຊື່ເປັນພາສາອັງກິດວ່າ: Clinical Legal Education (FLPCLE);

ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງຂຶ້ນໃນປີ2007 ໂດຍເມື່ອກ່ອນເປັນພຽງແຕ່ໜ່ວຍງານຫນຶ່ງຂອງພາກວິຊານິຕິສາດ ເອີ້ນວ່າ: ໜ່ວຍງານກົດໝາຍເພື່ອປະຊາຊົນ. ມາຮອດ ປີ 2010 ຈຶ່ງໄດ້ມີການປ່ຽນຊື່ມາເປັນ ສູນບໍລິການກົດໝາຍເພື່ອປະຊາຊົນ. ມາຮອດປີ 2014 ໄດ້ເປີດຫ້ອງການໃຫ້ຄໍາປຶກສາທາງດ້ານກົດໝາຍ

## ພາລະບົດບາດ

ສູນບໍລິການກົດໝາຍເພື່ອປະຊາຊົນມີພາລະບົດບາດສອງຢ່າງຄື:

1. ສ້າງຄວາມເຂັ້ມແຂງແກ່ນັກສຶກສາໃນການໃຫ້ຄວາມຮູ້ແກ່ປະຊາຊົນຜູ້ດ້ອຍໂອກາດ;

2. ສ້າງຄວາມເຂັ້ມແຂງແກ່ນັກສຶກສາໃນການໃຫ້ຄໍາປຶກສາທາງດ້ານກົດໝາຍແກ່ປະຊາຊົນ ເພື່ອໃຫ້ພວກເຂົາສາມາດເຖິງຂະບວນຍຸຕິທໍາ.

FLPCLE

## ໂຄງຮ່າງການຈັດຕັ້ງ ສູນບໍລິການກົດໝາຍເພື່ອປະຊາຊົນ




## ເປົ້າໝາຍ ແລະ ປະໂຫຍດຂອງ CLE ໃນການສ້າງຄວາມເຂັ້ມແຂງ

### 1.ນັກສຶກສາ

ເປັນການເປີດໂອກາດແກ່ນັກສຶກສາ ທີ່ຈະໄດ້ສັງເກດເຫັນ ຫຼື ໄດ້ປະສົບການໃນການເຮັດວຽກຕົວຈິງກັບການໃຫ້ຄວາມຮູ້ທາງດ້ານກົດໝາຍ, ລູກຄວາມ ຫຼື ລູກຄວາມທີ່ສົມມຸດຂຶ້ນ ຊຶ່ງຈະເຮັດໃຫ້ນັກສຶກສາໄດ້ຮຽນຮູ້ ແລະ ນໍາໃຊ້ຄວາມຮູ້, ທັກສະ ແລະ ຄຸນຄ່າ ຈາກປະສົບການດັ່ງກ່າວ;

### 2.ຊຸມຊົນ

ສ້າງຄວາມເຂັ້ມແຂງໂດຍໃຫ້ການບໍລິການທາງດ້ານການກົດໝາຍແກ່ຜູ້ດ້ອຍໂອກາດທີ່ບໍ່ສາມາດເຂົ້າເຖິງການບໍລິການນີ້ໄດ້;

### 3.ນັກກົດໝາຍ

ພັດທະນາຈັນຍາທໍາໃນການບໍລິການສັງຄົມ ແລະ ຄວາມຍຸຕິທໍາໃນສັງຄົມແລະສ້າງພື້ນຖານໃຫ້ມີຄວາມຮັບຜິດຊອບທາງດ້ານວິຊາຊີບ

### 4.ອາຈານກົດໝາຍ

ເພື່ອເຮັດໃຫ້ອາຈານມີສ່ວນຮ່ວມໃນການພັດທະນາດ້ານວິຊາການໃນທັກສະ ແລະ ທິດສະດີໃນການປະກອບວິຊາຊີບທີ່ເຊື່ອມໂຍງລະຫວ່າງມະຫາວິທະຍາໄລ ແລະ ຜູ້ປະກອບວິຊາຊີບກົດໝາຍ

### 5. ລະບົບການສຶກສາ

ວິທີການສອນແບບມີສ່ວນຮ່ວມ ແລະ ສະທ້ອນຄືນ ສ້າງແຮງບັນດານໃຈໃຫ້ແກ່ນັກສຶກສາໃນການປະກອບວິຊາຊີບທາງດ້ານກົດໝາຍ ຊຶ່ງການບັນຍາຍ ແລະ ການອ່ານ ບໍ່ສາມາດເຮັດໃຫ້ບັນລຸຜົນໄດ້. ການຮຽນແບບສະທ້ອນຄືນ ຍັງເປັນວິທີການສອນທີ່ໄດ້ປະສິດທິຜົນທີ່ສຸດສໍາລັບການຮຽນແບບຜູ້ໃຫຍ່.

### 6. ການຄຸ້ມຄອງລັດ ຄຸ້ມຄອງສັງຄົມ ດ້ວຍກົດໝາຍ ແລະ ການເຂົ້າເຖິງຄວາມຍຸຕິທໍາ ເພື່ອສັງຄົມ